ທ່ານສາມາດທຳການສຳພາດຂອງທ່ານຢູ່ທີ່ຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນຂອງທ່ານຫລືທາງໂທຣະສັບໄດ້ທີ່ເລກ

**1-877-501-2233**



ເພື່ອຈະຮ້ອງຂໍເອົາ Basic Food ທາງອອນລາຍນ໌ໄປທີ່
**washingtonconnection.org**

ທ່ານສາມາດທຳການສຳພາດຂອງທ່ານຢູ່ທີ່ຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນຂອງທ່ານຫລືທາງໂທຣະສັບໄດ້ທີ່ເລກ:
**1-877-501-2233**

ເພື່ອຣາຍຣະອຽດກ່ຽວກັບໂຄງການ
Basic Food and Employment,
ໄປທາງອອນລາຍນ໌ທີ່:
**www.dshs.wa.gov/esa/community-partnership-program/basic-food-employment-training-bfet**

Washington State Department of Social & Health Services

*Transforming lives*

DSHS 22-1572 LA (Rev. 6/18) Laotian

# ທ່ານບໍ່ມີເຮືອນຢູ່ບໍ່?

## Basic Food

## ສາມາດຊ່ວຍເຫລືອໄດ້!



Take a Fresh Look

Basic Food

## ຂ້ອຍສາມາດໄດ້ຮັບ **Basic Food** ບໍ່ຖ້າຫາກວ່າຂ້ອຍອາສັຍຢູ່ຕາມທາງຖະນົນ,ຢູ່ໃນເຮືອນພັກເຊົາ,ຢູ່ໃນຣົດຍົນ,ຢູ່ໃນໂມເທລຫລືຢູ່ໃນສະພາບການຊົ່ວຄາວອື່ນໆ

- ຖ້າຫາກວ່າທ່ານບໍ່ມີທີ່ຢູ່ຖາວອນ,ທ່ານຍັງຈະມີສິດໄດ້ຮັບໂຄງການ Basic Food. ຢູ່..ທ່ານສາມາດໃຊ້ໃຊ້ທີ່ຢູ່ຂອງຜູ້ຕາງຫນ້າທີ່ຖືກອະນຸຍາດໃຫ້ເປັນບ່ອນທີ່ຈະຮັບເອົາຫນັງສືໄປສະນີ.
- ຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນພັກເຊົາ, ທ່ານຍັງສາມາດໄດ້ຮັບ Basic Food ເຖິງແມ່ນວ່າເຮືອນພັກເຊົາມີຄາບອາຫານໄວ້ໃຫ້ກໍຕາມ.
- ຖ້າຫາກວ່າທ່ານມີອາຍຸຕ່ຳກວ່າ 18 ປີ,ບໍ່ມີເຮືອນຢູ່,ແລະບໍ່ໄດ້ອາສັຍຢູ່ນຳພໍ່ແມ່ຫລືຜູ້ປົກຄອງຂອງທ່ານ,ທ່ານຍັງສາມາດໄດ້ຮັບ Basic Food ຢູ່.

## ຂ້ອຍສາມາດໄດ້ຮັບ **Basic Food** ບໍ່ໃນຂະນະທີ່ຂ້ອຍອາສັຍຢູ່ນຳຄົນໃດຄົນນຶ່ງອີກໃນຣະຍະສັ້ນ?

ທ່ານຍັງຈະມີເງື່ອນໄຂໄດ້ຮັບ Basic Food ເຖິງທ່ານກຳລັງອາສັຍຢູ່ນຳຄົນໃດຄົນນຶ່ງອີກຮອດເວລາ 90 ວັນ.

- ຖ້າຫາກວ່າທ່ານບໍ່ມີເງິນສຳລັບອາຫານແລະປັດຈຸບັນນີ້ກິນນຳຫມູ່ຢູ່ໃນເຮືອນຂອງທ່ານຈົນກວ່າທ່ານສາມາດໄດ້ເງິນສຳລັບອາຫານ,ທ່ານບໍ່ຕ້ອງໄດ້ຮ້ອງຂໍເອົານຳຄົນທີ່ທ່ານອາສັຍຢູ່ນຳນອກຈາກວ່າທ່ານມີແຜນທີ່ຈະຊື້ແລະຄົວກິນອາຫານນຳເຂົາເຈົ້າຫລັງຈາກທີ່ທ່ານໄດ້ຮັບ Basic Food.
- ຖ້າຫາກວ່າທ່ານຊື້ແລະຄົວກິນອາຫານເປັນປະຈຳນຳຄົນອື່ນທີ່ທ່ານອາສັຍຢູ່ນຳ, ທ່ານຈະຕ້ອງໄດ້ຮ້ອງຂໍເອົານຳຫມົດທຸກຄົນແລະມີເງື່ອນໄຂໄດ້ຮັບສຳລັບອາຫານນຳກັນຫມົດ.
- ຖ້າຫາກວ່າທ່ານຊື້ແລະຄົວກິນອາຫານເປັນປະຈຳສຳລັບທ່ານເອງຫລືຄອບຄົວຂອງທ່ານເທົ່ານັ້ນ,ທ່ານບໍ່ຕ້ອງໄດ້ຮ້ອງຂໍເອົານຳຄົນອື່ນທີ່ທ່ານກຳລັງຢູ່ນຳໃນປັດຈຸບັນນີ້ນອກຈາກວ່າທ່ານມີອາຍຸຕ່ຳກວ່າ 22 ປີແລະທ່ານ ກຳລັງຢູ່ນຳພໍ່ແມ່ຂອງທ່ານ.

## ຂ້ອຍຈະຮ້ອງຂໍເອົາ **Basic Food** ໄດ້ແນວໃດ?

ທ່ານສາມາດຮ້ອງຂໍເອົາ Basic Food ໄດ້ໂດຍ:

- ໄປຫາຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນຂອງທ່ານ;
- ຮ້ອງຂໍເອົາທາງອອນລາຍນ໌ໄດ້ທີ່: **washingtonconnection.org**; ຫລື
- ໄດ້ຮັບເອົາຄວາມຊ່ວຍເຫລືອເພື່ອຈະຮ້ອງຂໍເອົາຈາກຜູ້ລົງພື້ນຖານຂອງ Basic Food.
- DSHS ເຮັດວຽກນຳຫ້ອງການຮ່ວມງານໃນຊຸມນຸມຊົນຫລາຍໆບ່ອນເພື່ອຈະເອົາຄຳຮ້ອງ Basic Food ໃຫ້ແລະຊ່ວຍເຫລືອນຳການດຳເນີນຄຳຮ້ອງຂໍ.ເພື່ອຈະຊອກຫາຄວາມຊ່ວຍເຫລືອໄກ້ທ່ານ,ເຂົ້າອອນລາຍນ໌ທີ່: **washingtonconnection.org/home/publicaccessdirectory.go**

ທ່ານສາມາດໃຊ້ຄອມພິວເຕີຢູ່ຕາມຫໍສະມຸດສາທາຣະນະຫລາຍໆບ່ອນເພື່ອຈະເຂົ້າຫາອິນເຕີແນດ.

## ຂ້ອຍຕ້ອງມີບັດ **ID** ມີຮູບຫລືຫລັກຖານວ່າຂ້ອຍແມ່ນໃຜບໍ່ເພື່ອຈະຮ້ອງຂໍເອົາ **Basic Food**?

ບັດ ID ມີຮູບແມ່ນທັນທາງນຶ່ງເພື່ອຈະພິສູດເອກກະລັກປະຈຳຕົວ.ທ່ານບໍ່ສາມາດຖືກປະຕິເສດສຳລັບການຊ່ວຍເຫລືອ Basic Food ຍ້ອນວ່າທ່ານບໍ່ມີບັດ ID ມີຮູບ.ທ່ານ ສາມາດໃຊ້ບັດ ID ໃນແບບອື່ນເຊັ່ນວ່າ:

- ບັດ ID ວຽກງານຫລືໂຮງຮຽນ
- ໃບຢັ້ງຢືນການເກີດ
- ບັດລົງທະບຽນບ່ອນບັດເລືອກຕັ້ງ
- ບັດສະວັດດີການສຸຂະພາບ
- ບັດ ID ຈາກພະແນກບໍຣິການສັງຄົມບ່ອນອື່ນ
- ສິ້ນເຊັກເບີກເງິນ

ພະນັກງານ Basic Food ສາມາດກວດເບິ່ງບັດປະຈຳຕົວ ຂອງທ່ານໂດຍການໂທຫາພະນັກງານບ່ອນຢູ່ອາສັຍຫລືນາຍຈ້າງຂອງທ່ານ.

## ຂ້ອຍຕ້ອງມີການສຳພາດສຳລັບ **Basic Food** ບໍ່?

ທ່ານຕ້ອງມີການສຳພາດສຳລັບ Basic Food. ທ່ານສາມາດທຳການສຳພາດຂອງທ່ານໄດ້ຢູ່ທີ່ຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນຂອງທ່ານຫລືທາງໂທຣະສັບໄດ້ທີ່: **1-877-501-2233**.



## ຂ້ອຍສາມາດໄດ້ຮັບຄວາມຊ່ວຍເຫລືອນຳການຝຶກຝົນຫລືການຊອກວຽກງານບໍ່?

- ແມ່ນ! ຖ້າຫາກວ່າທ່ານໄດ້ຮັບ Basic Food, ທ່ານສາມາດອາສາສະມັກສຳລັບໂຄງການ Basic Food Employment &Training (BFET).
- BFET ຈະເອົາໃຫ້ການຊອກວຽກງານ,ການຝຶກຝົນເຣື່ອງການຊອກວຽກງານ, ການບໍຣິການດ້ານການສຶກສາ,ການຝຶກຝົນວິຊາຊີບ,ແລະໂອກາດວຽກງານອື່ນໆໃຫ້ແກ່ບຸກຄົນຜູ້ທີ່ໄດ້ຮັບ Basic Food.

ອົງການຫລາຍໆອົງການອາດຈະເອົາຄວາມຊ່ວຍເຫລືອໃຫ້ນຳການຂົນສົ່ງໄປມາ, ການຝາກເດັກນ້ອຍ,ຫລືການຊ່ວຍເຫລືອແນວອື່ນທີ່ສາມາດຊ່ວຍເຫລືອທ່ານເຮັດວຽກໄປສູ່ເປົ້າຫມາຍວິຊາຊີບຂອງທ່ານ.ການບໍຣິການໄດ້ຖືກເອົາໃຫ້ຜ່ານຄອນເຫລດຕາມຊຸມນຸມຊົນຫລືຄອນເຫລດການຊ່າງແລະ/ຫລືອົງການຕັ້ງຢູ່ຕາມຊຸມນຸມຊົນ (CBO) ແລະກວມເອົາຂະແນງວຽກງານແລະຈຳພວກວິຊາຊີບມາກມາຍຫລາຍຢ່າງ. ເພື່ອຣາຍຣະອຽດກ່ຽວກັບການບໍຣິການ BFET, ເຂົ້າອອນລາຍນ໌ໄປທີ່: **www.dshs.wa.gov/esa/community-partnership-program/basic-food-employment-training-bfet**